**ມິຊຊາອາທິດທີ 25 ກຳນົດທຳມະດາ ປີ B**

**ວັນທີ 19 ກັນຍາ 2021**



**ພຣະວໍລະສານໂດຍນັກບຸນມາໂກ 9, 29-36**

ເມື່ອອອກຈາກທີ່ນັ້ນແລ້ວ, ພຣະເຢຊູເຈົ້າສະເດັດຜ່ານແຂວງຄາລີເລພ້ອມກັບພວກສາວົກ ໂດຍບໍ່ຢາກໃຫ້ໃຜຮູ້ຈັກ. ພຣະອົງຊົງສັ່ງສອນພວກສາວົກວ່າ: "ບຸດມະນຸດຈະຖືກມອບໃນເງື້ອມມື ຂອງຄົນທັງຫລາຍ, ເຂົາຈະປະຫານຊີວິດພຣະອົງ, ແລະເມື່ອສິ້ນພຣະຊົນແລ້ວ, ວັນທີສາມ ພຣະ ອົງຈະກັບຄືນຊີບ." ພວກສາວົກບໍ່ເຂົ້າໃຈຖ້ອຍຄຳເຫລົ່ານີ້, ທັງຢ້ານບໍ່ຫານຖາມພຣະອົງດ້ວຍ.

ແລ້ວພຣະອົງແລະພວກລູກສິດກໍມາຮອດເມືອງກາຟານາອຸມ; ພໍເຂົ້າໄປໃນເຮືອນ, ພຣະ ອົງກໍຖາມພວກເຂົາວ່າ: "ພວກເຈົ້າຖຽງກັນເລື້ອງຫຍັງນຳທາງ?" ພວກເຂົາມິດຢູ່. ຍ້ອນໃນ ລະຫວ່າງທາງ, ພວກເຂົາໄດ້ຖຽງກັນວ່າ ຜູ້ໃດຈະໃຫຍ່ກວ່າໝູ່. ເມື່ອພຣະເຢຊູເຈົ້າຊົງປະທັບນັ່ງ ແລ້ວ, ກໍຮຽກເອົາສາວົກທັງສິບສອງເຂົ້າມາ ກ່າວວ່າ: "ຖ້າໃຜຢາກເປັນຜູ້ທີໜຶ່ງ, ກໍໃຫ້ຜູ້ນັ້ນເປັນຜູ້ ສຸດທ້າຍແລະເປັນຜູ້ຮັບໃຊ້ຜູ້ອື່ນທັງໝົດເຖີດ."

ແລ້ວນັ້ນ, ພຣະອົງກໍຈູງເອົາເດັກນ້ອຍຜູ້ໜຶ່ງມາຢືນກາງພວກເຂົາ, ອູ້ມເດັກນັ້ນແລ້ວກ່າວ ວ່າ: "ຜູ້ໃດຮັບຕ້ອນເດັກນ້ອຍແບບນີ້ໃນນາມຂອງເຮົາກໍແມ່ນຮັບຕ້ອນເຮົາເອງ. ຜູ້ໃດຮັບຕ້ອນເຮົາ, ກໍບໍ່ແມ່ນຮັບຕ້ອນເຮົາ, ແຕ່ແມ່ນຮັບຕ້ອນພຣະອົງຜູ້ຊົງໃຊ້ເຮົາມາ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 9, 29-36**

ອາທິດແລ້ວນີ້, ເປໂຕໄດ້ຕອບຄຳຖາມຂອງພຣະເຢຊູເຈົ້າກ່ຽວກັບຕົວຂອງພຣະອົງວ່າ: ສຳລັບພວກເຈົ້າ, ເຮົາແມ່ນໃຜ? ແລະພຣະເຢຊູເຈົ້າກໍໄດ້ຮັບຄຳຕອບທີ່ຖືກຕ້ອງຈາກເປໂຕ: ພຣະອົງແມ່ນພຣະກຣິສໂຕ. ຄຳຕອບນີ້ພຣະເຢຊູເຈົ້າໄດ້ທຳໃຫ້ມັນກະຈ່າງແຈ້ງດ້ວຍການປະກາດເຖິງການທໍລະມານແລະຕາຍຂອງພຣະອົງແລະການກັບເປັນຄືນມາໃນວັນທີສາມ.

ເຖິງວ່າພຣະເຢຊູເຈົ້າຈະກ່າວຢ່າງຈະແຈ້ງເຊັ່ນນັ້ນກໍຕາມ ແຕ່ພວກສາວົກຂອງພຣະອົງກໍຍັງບໍ່ເຂົ້າໃຈແລະພວກເຂົາກໍບໍ່ຫານຈະຖາມພຣະອົງອີກ. ເປັນຫຍັງພວກເຂົາຈິ່ງຍັງບໍ່ເຂົ້າໃຈກ່ຽວກັບຄຳສອນຂອງພຣະເຢຊູເຈົ້າ? ອາດຈະແມ່ນການປະກາດເຖິງການທໍລະມານແລະຕາຍຂອງພຣະອົງບໍ່ໄດ້ສອດຄ່ອງກັບຄວາມນຶກຄິດໃນຫົວຂອງພວກສາວົກ. ເພາະພວກເຂົາຄິດວ່າພຣະເຢຊູເຈົ້າແມ່ນພຣະເມດຊີອາຜູ້ທີ່ຈະມາຊ່ວຍພວກເຂົາໃຫ້ອອກຈາກຄວາມຍາກລຳບາກດ້ານການເມືອງ, ດ້ານຊີວິດການເປັນຢູ່ ແລະຍິ່ງໄປກວ່ານັ້ນພວກເຂົາຜູ້ທີ່ຕິດຕາມພຣະອົງມາຈະໄດ້ເປັນໃຫຍ່, ມີອຳນາດແລະຖານະໃນສັງຄົມ. ແຕ່ຄວາມເປັນຈິງບໍ່ຄືພວກເຂົາຄິດ. ເພາະສະນັ້ນ, ພວກເຂົາຈິ່ງບໍ່ເຂົ້າໃຈ.

ວັນນີ້, ພຣະເຢຊູເຈົ້າບໍ່ພຽງແຕ່ປະກາດເຖິງການທໍລະມານແລະຕາຍຂອງພຣະອົງເປັນເທື່ອທີສອງເທົ່ານັ້ນ ແຕ່ພຣະອົງຍັງສອນພວກເຂົາອີກເລື່ອງໜຶ່ງວ່າ: ຜູ້ເປັນໃຫຍ່ໃນພວກເຂົາຕ້ອງກາຍເປັນຜູ້ຮັບໃຊ້. ແລະຜູ້ທີໜຶ່ງໃນພວກເຂົາຕ້ອງກາຍເປັນຜູ້ສຸດທ້າຍ. ອັນເປັນຄຳສອນທີ່ກົງກັນຂ້າມກັບແນວຄິດຂອງໂລກ ແລະຍິ່ງໄປກວ່ານັ້ນເປັນສິ່ງທີ່ພວກສາວົກຍອມຮັບໄດ້ຍາກ. ເພາະໃຜໆໃນພວກເຂົາກໍຢາກເປັນຜູ້ໃຫຍ່ແລະຜູ້ທີໜຶ່ງ. ສ່ວນພຣະເຢຊູເຈົ້າ, ພຣະອົງມາໃນໂລກນີ້ບໍ່ແມ່ນເພື່ອເປັນນາຍ, ແຕ່ເປັນຜູ້ຮັບໃຊ້. ພຣະອົງມາບໍ່ແມ່ນໃຫ້ຄົນອື່ນຮັບໃຊ້, ແຕ່ເພື່ອຮັບໃຊ້ຄົນອື່ນຈົນເຖິງຍອມສະລະຊີວິດຂອງຕົນເພື່ອພວກເຂົາ.

ດ້ວຍເຫດນີ້, ຜູ້ທີ່ເປັນສິດຂອງພຣະອົງກໍຕ້ອງເດີນຕາມເສັ້ນທາງທີ່ພຣະອົງໄດ້ເດີນແລະກະທຳສິ່ງທີ່ພຣະອົງໄດ້ກະທຳຄືການເປັນຜູ້ຮັບໃຊ້ຄົນອື່ນດ້ວຍຄວາມຮັກ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ມີດວງໃຈສຸພາບອ່ອນຫວານເໝືອນກັບພຣະອົງ. ບໍ່ມັກໃຫຍ່ໄຝ່ສູງ, ແຕ່ເປັນຄົນສຸພາບຖ່ອມຕົນແລະຮັບໃຊ້ຄົນອື່ນ. ເພື່ອທຸກຄົນຈະໄດ້ຮູ້ວ່າພຣະອົງແມ່ນພຣະອາຈານຂອງລູກແລະກັບມາເປັນສິດຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ